STATE OF WASHINGTON
DEPARTMENT OF SOCIAL AND HEALTH SERVICES
DIVISION OF CHILD SUPPORT (DCS)

Washington State Department of Social & Health Services
Transforming lives

# ຄຳຮ້ອງຂໍເອົາການບໍລິການບັງຄັບເກັບເງິນລ້ຽງເດັກທີ່ບໍ່ມີເງິນການຊ່ວຍເຫລືອ
# Application for Nonassistance Support Enforcement Services

## ຄຳແນະນຳ

ອ່ານຟອມໃບນີ້ຢ່າງຣະມັດຣະວັງ. **ຂຽນປະກອບໃບຟອມ *ການສົ່ງຕໍ່ໃນເງິນລ້ຽງເດັກ, ການແຈ້ງການຂອງການຈ່າຍເງິນລ້ຽງເດັກ, ແລະ ຟອມໃບນີ້.*** ສົ່ງໃບຟອມທີ່ຖືກຂຽນປະກອບແລ້ວຄືນມາ ຫາພະແນກເກັບເງິນລ້ຽງເດັກ (DCS) ຕາມທີ່ຢູ່ທີ່ຖືກບົ່ງຢູ່ຫນ້າ 4. ຍົກເວັ້ນແຕ່ລາຍເຊັນຂອງທ່ານ, ຈົ່ງຕີພິມ ຫລື ຂຽນເປັນຕົວ ຄຳຕອບຂອງທ່ານດ້ວຍນ້ຳມຶກສີຟ້າ ຫລື ສີດຳເທົ່ານັ້ນ.

## ຣາຍຣະອຽດກ່ຽວກັບຂ້າພະເຈົ້າ

| ຊື່ (ຊື່, ຊື່ກາງ, ນາມສະກຸນ) | ເລກໂທຣະສັບ<br>( ) | ເລກໂຊໂຊ |
|---|---|---|
| ທີ່ຢູ່ຖະນົນ | ເມືອງ    ຣັດ | ຊິບໂຄດ |

## ຣາຍຣະອຽດກ່ຽວກັບພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ

ຊື່ (ຊື່, ຊື່ກາງ, ນາມສະກຸນ)

## ການຈ່າຍເງິນ

ຂ້າພະເຈົ້າເຂົ້າໃຈວ່າພະແນກ DCS ສາມາດສົ່ງການຈ່າຍເງິນລ້ຽງເດັກມາຫາຂ້າພະເຈົ້າໂດຍທາງການໂອນເງິນທາງເອເລກໂຕຣນິກ (EFT) ໂດຍການປ່ງການຈ່າຍເງິນເຂົ້າໃສ່ບັນຊີເຊັກກິ້ງ ຫລື ເຊັວວິ້ງຂອງຂ້າພະເຈົ້າໂດຍກົງໂລດ. ຂ້າພະເຈົ້າອະນຸຍາດການຝາກເຂົ້າໂດຍກົງ ໂດຍການຂຽນປະກອບຣາຍຣະອຽດຂອງບັນຊີທະນາຄານຕໍ່ລົງໄປນີ້. **(ຄັດເຊັກເງິນທີ່ຖືກລົບລ້າງແລ້ວມານຳ)**

______________________________
ຊື່ຂອງທະນາຄານ

______________________________
ເລກທາງແລ່ນຂອງທະນາຄານ

☐ ເຊັກກິ້ງ ☐ ເຊັວວິ້ງ

______________________________
ເລກບັນຊີຂອງທະນາຄານ

**ຖ້າຫາກວ່າຂ້າພະເຈົ້າບໍ່ອະນຸຍາດການຝາກເຂົ້າໂດຍກົງ, ພະແນກ DCS ຈະສົ່ງມາໃຫ້ຂ້າພະເຈົ້າໂດຍອັດຕະໂນມັດໂລດ ບັດ Visa ຖອນເງິນທີ່ມີເງິນເກັບມັຽນໄວ້ຢູ່ນຳ ຊຶ່ງຖືກເອີ້ນວ່າບັດເງິນ DCS.** ຖ້າຫາກວ່າພະແນກ DCS ຈົດຊື່ຂ້າພະເຈົ້າເຂົ້າໃສ່ໃນໂຄງການບັດເງິນ DCS, ພະແນກ DCS ຈະຝາກໂອນເງິນຈ່າຍລ້ຽງເດັກຂອງຂ້າພະເຈົ້າເຂົ້າໃສ່ບັດແທນທີ່ວ່າຈະໃສ່ບັນຊີທະນາຄານຂອງຂ້າພະເຈົ້າ. ຢູ່ໃນກໍຣະນີສ່ວນຫລາຍ, ເງິນຈ່າຍຄ່າລ້ຽງລູກຈະມີໄວ້ໃຫ້ໃນບັນຊີທະນາຄານຂອງຂ້າພະເຈົ້າ ຫລື ໃນບັດເງິນ DCS ຂອງຂ້າພະເຈົ້າ ພາຍໃນສາມວັນເຮັດການ ຫລັງຈາກທີ່ພະແນກ DCS ຄິດໄລ່ເງິນໃສ່ກໍຣະນີຂອງຂ້າພະເຈົ້າ. ບັດເງິນ DCS ສາມາດຖືກໃຊ້ການໄດ້ຢູ່ທຸກໆບ່ອນທີ່ຮັບເອົາບັດ VISA ຫລື ຕາມເຄື່ອງຈັກ ATM. ຂ້າພະເຈົ້າສາມາດໄດ້ຮັບຣາຍຣະອຽດເພີ້ມເຕີມກ່ຽວກັບການຈ່າຍເງິນທາງເອເລກໂຕຣນິກ, ຫລື ສອບຖາມກ່ຽວກັບທາງເລືອກເອົາທາງອື່ນຂອງຂ້າພະເຈົ້າ ສຳລັບການຮັບເອົາການຈ່າຍເງິນ, ໂດຍການໂທໄປທີ່ 800-468-7422 ຫລື ທາງອອນລາຍນ໌ໄດ້ທີ່ www.dshs.wa.gov/esa/division-child-support.

## ການແຈ້ງການ

ຂ້າພະເຈົ້າຂໍແຈ້ງວ່າຂ້າພະເຈົ້າ:

1. ບໍ່ໄດ້ຮັບ ແລະ ບໍ່ໄດ້ຂໍເອົາການບໍຣິການເກັບເງິນລ້ຽງເດັກຈາກຣັດອື່ນ ຫລື ເຈົ້າຫນ້າທີ່ອື່ນ.
2. ບໍ່ວ່າຈະມີຄວາມຄຸ້ມຄອງຮ່າງກາຍຂອງເດັກນ້ອຍສຳລັບຜູ້ທີ່ຂ້າພະເຈົ້າຊອກເອົາເງິນລ້ຽງເດັກປັດຈຸບັນ ຫລື ມີຄວາມຄຸ້ມຄອງຮ່າງກາຍຂອງເດັກນ້ອຍສຳລັບເວລາທີ່ຫນີ້ເງິນລ້ຽງລູກໄດ້ເກີດຂຶ້ນ.
3. ມີຄຳອະນຸຍາດຂອງຜູ້ປົກຄອງຕາມກົດຫມາຍທີ່ຈະເບິ່ງແຍງດູແລເດັກນ້ອຍ.
4. ບໍ່ໄດ້ເຮັດໃຫ້ບໍ່ມີຄວາມຮັບຜິດຊອບໃນການເບິ່ງແຍງດູແລຮ່າງກາຍຕາມກົດຫມາຍຂອງຄວາມຄຸ້ມຄອງຂອງເດັກນ້ອຍ.
5. ບໍ່ໄດ້ຮັບເງິນຊ່ວຍເຫລືອແວວແຟຣ໌ສຳລັບເດັກນ້ອຍ.

ຂ້າພະເຈົ້າຂໍແຈ້ງວ່າພາຍໃຕ້ການປັບໄຫມລົງໂທດຂອງການເວົ້າເທັດພາຍໃຕ້ກົດຫມາຍຂອງຣັດວໍຊິງຕັນວ່າສິ່ງທີ່ກ່າວມານີ້ເປັນຄວາມຈິງ ແລະ ຖືກຕ້ອງ.

| ລາຍເຊັນ | ສະຖານທີ່ເຊັນຊື່ | ວັນທີ |
|---|---|---|
| | | |

ການຍອມຮັບຮູ້ກ່ຽວກັບການຈ່າຍເງິນທີ່ຖືກສົ່ງອອກໄປດ້ວຍຄວາມຜິດພາດ ແລະ/ຫລື ການຈ່າຍເງິນເກີນ: ນອກຈາກວ່າຂ້າພະເຈົ້າຫມາຍໃສ່ບອກ໌ "ບໍ່ແມ່ນ" ຢູ່ຂ້າງລຸ່ມນີ້, ລາຍເຊັນຂອງຂ້າພະເຈົ້າຢູ່ໃນໃບຄຳຮ້ອງຈະເອົາຄຳອະນຸຍາດໃຫ້ພະແນກເກັບເງິນລ້ຽງເດັກ (DCS) ທີ່ຈະເກັບເອົາໄວ້ຮອດ 10 ເປີເຊັນຂອງເງິນລ້ຽງລູກປັດຈຸບັນຂອງຂ້າພະເຈົ້າແລະ ເງິນລ້ຽງລູກບໍ່ຈ່າຍກາຍຜ່ານມາຂອງຂ້າພະເຈົ້າທັງຫມົດທີ່ຖືກຈ່າຍໃສ່ສຳນວນເອກສານນີ້ຈົນກວ່າການຈ່າຍເງິນທີ່ຖືກສົ່ງອອກໄປດ້ວຍຄວາມຜິດພາດໄດ້ຖືກກອບກູ້ເອົາຄືນທັງຫມົດ.

☐ ບໍ່ແມ່ນ. ກະຣຸນາຕິດຕໍ່ມາຫາຂ້າພະເຈົ້າກ່ອນທີ່ທ່ານຈະພະຍາຍາມທີ່ຈະກອບກູ້ເອົາເງິນຈ່າຍທີ່ຖືກສົ່ງອອກໄປດ້ວຍຄວາມຜິດພາດຈາກການຈ່າຍເງິນລ້ຽງລູກໃນອະນາຄົດຂອງຂ້າພະເຈົ້າ.

ພະແນກ DCS ຈະໃຫ້ການບໍຣິການບັງຄັບເກັບເງິນລ້ຽງລູກເຕັມທີ່ໃນຣະດັບດອັນດຽວກັບບໍ່ກ່ຽວວ່າຂ້າພະເຈົ້າຈະຫມາຍໃສ່ບອກ໌ "ບໍ່ແມ່ນ" ຢູ່ຂ້າງລຸ່ມນີ້, ພະແນກ DCS ອາດຈະໃຊ້ວິທີການເກັບເອົາເງິນແບບອື່ນໆເພື່ອຈະກອບກູ້ເອົາການຈ່າຍເງິນທີ່ຖືກສົ່ງອອກໄປດ້ວຍຄວາມຜິດພາດມາຄືນ, ຊຶ່ງສາມາດລວມເອົາການກັກເອົາເງິນຣາຍໄດ້ ແລະ ການກະທຳຢ່າງອື່ນໆທີ່ຖືກອະນຸຍາດໃຫ້ພາຍໃຕ້ກົດຫມາຍ RCW 74.20A.270.

ຂ້າພະເຈົ້າຕ້ອງການໃຫ້ພະແນກ DCS ທີ່ຈະເອົາການບໍລິການບັງຄັບເກັບເງິນລ້ຽງດູເດັກໃຫ້ແກ່ຂ້າພະເຈົ້າ ແລະ ລູກຂອງຂ້າພະເຈົ້າ.ຂ້າພະເຈົ້າຕ້ອງການໃຫ້ພະແນກ DCS ທີ່ຈະຮັບເອົາການຈ່າຍເງິນລ້ຽງດູເດັກທຸກໆຢ່າງ (ເຊັກ, ມັນນີອໍເດີ, ການໂອນເງິນທາງອີເລັກໂຕຣນິກ, ອື່ນໆ) ທີ່ຖືກເກັບເອົາມາໄດ້ສຳລັບຂ້າພະເຈົ້າ.

ຖ້າຫາກວ່າຂ້າພະເຈົ້າດຽວນີ້ໄດ້ຮັບການຈ່າຍເງິນລ້ຽງດູເດັກໂດຍຜ່ານສານຂອງລັດ ຫລື ຂອງຊົນເຜົ່າ ຫລື ຫ້ອງການບັງຄັບເກັບເງິນລ້ຽງດູເດັກຂອງລັດ ຫລື ຂອງຊົນເຜົ່າ, ຂ້າພະເຈົ້າຕ້ອງການໃຫ້ສານ ຫລື ຫ້ອງການທີ່ຈະສົ່ງການຈ່າຍເງິນທຸກໆຢ່າງໄປຫາພະແນກ DCS.

ຂ້າພະເຈົ້າອ່ານ ແລະ ເຂົ້າໃຈໃບຟອມ ***ລາຍລະອຽດກ່ຽວກັບການບັງຄັບໃຊ້ເຣື່ອງເງິນລ້ຽງດູເດັກທີ່ບໍ່ມີການຊ່ວຍເຫລືອ*** ທີ່ຂ້າພະເຈົ້າໄດ້ຮັບນຳຄຳຮ້ອງໃບນີ້.

ຂ້າພະເຈົ້າເຂົ້າໃຈວ່າ:

1. ພະແນກ DCS ເກັບເອົາເງິນນຳຂ້າພະເຈົ້າສຳລັບຄ່າທຳນຽມ $35.00 ປະຈຳປີ ຖ້າຫາກວ່າຂ້າພະເຈົ້າ ບໍ່ເຄີຍໄດ້ຮັບຈັກເທື່ອ ເງິນຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຍາກຈົນ (TANF), ເງິນຊົນເຜົ່າ TANF, ຫລື ການຊ່ວຍເຫລືອໃຫ້ແກ່ຄອບຄົວທີ່ມີເດັກນ້ອຍຫວັງເພິ່ງ (AFDC) ສຳລັບເດັກນ້ອຍຢູ່ໃນຄອບຄົວຂອງຂ້າພະເຈົ້າ. ພະແນກ DCS ກັກເອົາເງິນຄ່າທຳນຽມອັນນີ້ໄວ້ (ລະຫວ່າງເດືອນອົກໂຕເບີ 1st ແລະ ເດືອນເຊັບເທັມເບີ 30th) ຈາກເງິນລ້ຽງລູກທີ່ຖືກເກັບເອົາໄດ້ຫລັງຈາກທີ່ພະແນກ DCS ເກັບໄດ້ແຈກຢາຍເງິນອອກໄປ $550.00 ເປັນເງິນຈ່າຍຄ່າລ້ຽງດູເດັກໃຫ້ຂ້າພະເຈົ້າໃນສຳນວນເອກສານອັນນຶ່ງໃນປີງົບປະມານຂອງລັດຖະບານກາງ.ຖ້າຫາກວ່າຂ້າພະເຈົ້າມີຫລາຍກວ່າສຳນວນເອກສານອັນນຶ່ງ, ຂ້າພະເຈົ້າອາດຈະຖືກເກັບເອົາຄ່າທຳນຽມສຳລັບແຕ່ລະສຳນວນເອກສານທີ່ $550.00 ໄດ້ຖືກແຈກຢາຍອອກໃຫ້ຂ້າພະເຈົ້າແລ້ວ.**ຖ້າຫາກວ່າຂ້າພະເຈົ້າໄດ້ຮັບເງິນ TANF, ເງິນຊົນເຜົ່າ TANF, ຫລື AFDC ຈາກລັດອື່ນ, ຂ້າພະເຈົ້າຕ້ອງໄດ້ສົ່ງຫລັກຖານມາໃຫ້, ເຊັ່ນວ່າໃບແຈ້ງການທີ່ຖືກສາບານໃສ່ຈາກຫ້ອງການເງິນຊ່ວຍເຫລືອສາທາຣະນະຈາກລັດອື່ນ ຫລື ໃບໂກປີຂອງບັນທຶກເງິນຊ່ວຍເຫລືອຂອງທ່ານທີ່ຖືກຢັ້ງຢືນ, ໄປຫາພະແນກ DCS. ພະແນກ DCS ຈະເກັບເອົາເງິນຄ່າທຳນຽມຈົນກວ່າຂ້າພະເຈົ້າສົ່ງຫລັກຖານອັນນັ້ນມາໃຫ້.**

   ຖ້າຫາກວ່າການຈ່າຍເງິນ $35 ກໍ່ໃຫ້ມີຄວາມຫຍຸ້ງຍາກລຳບາກສຳລັບຄອບຄົວຂອງຂ້າພະເຈົ້າ,ຂ້າພະເຈົ້າຈະຂໍເອົາການຍົກເວັ້ນໂດຍການຮ້ອງຂໍເອົາການປະຊຸມນຳຄະນະກັມມະການ.
2. ຖ້າຫາກວ່າພະແນກ DCS ສົ່ງສຳນວນເອກສານຂອງຂ້າພະເຈົ້າໄປຫາລັດອື່ນສຳລັບການບັງຄັບໃຊ້, ລັດອື່ນອາດຈະເກັບເອົາເງິນຄ່າທຳນຽມສຳລັບການບໍລິການອັນເຈາະຈົງ. ລັດອື່ນອາດຈະເກັບເອົາຄ່າທຳນຽມຂອງເອົາເຈົ້າໂດຍການກັກເອົາເງິນສ່ວນນຶ່ງໄວ້ຂອງເງິນເກັບເອົາສຳລັບຄ່າລ້ຽງລູກ.
3. ພະແນກ DCS ຈະຕ້ອງໄດ້ເປີດເຜີຍຊື່ຂອງຂ້າພະເຈົ້າ ແລະ ຊື່ຂອງລູກຂອງຂ້າພະເຈົ້າ ໃຫ້ແກ່ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ.
4. ຂ້າພະເຈົ້າຕ້ອງເອົາເລກໂຊໂຊຂອງຂ້າພະເຈົ້າໃຫ້ພະແນກ DCS. ພະແນກ DCS ຈະໃຊ້ເລກໂຊໂຊສຳລັບຈຸດປະສົງຂອງການບັງຄັບເກັບເງິນລ້ຽງດູເດັກຕາມທີ່ຖືກຕີຄວາມຫມາຍຢູ່ໃນ Title IV-D ຂອງກົດຫມາຍ Social Security Act.
5. ພະແນກ DCS ບໍ່ສາມາດເກັບເອົາຫນີ້ເງິນລ້ຽງລູກທີ່ຖືກກີດກັ້ນໂດຍກົດບັນຍັດຂອງຂອບເຂດເວລາ.
6. ພະແນກ DCS ບໍ່ສາມາດກຳນົດໃຫ້ຊົນເຜົ່າອິນດຽນ, ກິຈການຄ້າທີ່ເປັນເຈົ້າຂອງໂດຍຊົນເຜົ່າ, ຫລື ກິຈການຄ້າທີ່ຄົນເຜົ່າອິນດຽນເປັນເຈົ້າຂອງ ທີ່ຖືກຕັ້ງຢູ່ໃນເຂດແດນສະຫງວນເພື່ອຈະກັກເອົາເງິນລ້ຽງດູເດັກຈາກລາຍໄດ້ທີ່ຖືກຈ່າຍໃຫ້ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ. ຖ້າຫາກວ່າຊົນເຜົ່າ ແລະ ພະແນກ DCS ມີສັນຍາທີ່ຈະເຮັດໄດ້, ພະແນກ DCS ຈະຂໍຮ້ອງໃຫ້ຊົນເຜົ່າທີ່ຈະບັງຄັບໃຊ້ຄຳສັ່ງຈ່າຍເງິນລ້ຽງດູເດັກຂອງຂ້າພະເຈົ້າ.
7. ພະແນກ DCS ຈະເອົາຄຳສັ່ງຈ່າຍເງິນລ້ຽງດູເດັກຂອງຂ້າພະເຈົ້າເຂົ້າໃສ່ໃນທະບຽນເງິນລ້ຽງດູເດັກຂອງລັດວໍຊິງຕັນ (WSSR).
8. ຖ້າຫາກວ່າຂ້າພະເຈົ້າມີຄຳສັ່ງຈາກສານທີ່ກຳນົດໃຫ້ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງທີ່ຈະຈ່າຍເງິນລ້ຽງດູເດັກໂດຍຜ່ານ WSSR, ສຳນວນເອກສານຂອງຂ້າພະເຈົ້າຈະຍັງຄົງຢູ່ໃນ WSSR ຈົນກວ່າສານຈະປົດປ່ອຍຄຳສັ່ງຂອງຂ້າພະເຈົ້າ.
9. ພະແນກ DCS ຈະແຈກຢາຍການເກັບເອົາເງິນລ້ຽງດູເດັກໃສ່ສຳນວນເອກສານຂອງຂ້າພະເຈົ້າ ຕາມທີ່ຖືກກຳນົດໄວ້ໂດຍກົດຫມາຍຂອງລັດຖະບານກາງ ແລະ ຂອງລັດ. ພະແນກ DCS ຈະ:
   a. ເອົາເງິນລ້ຽງດູເດັກປັດຈຸບັນໃສ່ເດືອນທີ່ມັນໄດ້ຖືກຮັບເອົາໃນເດືອນນັ້ນ.
   b. ສົ່ງເງິນລ້ຽງດູເດັກປັດຈຸບັນມາໃຫ້ຂ້າພະເຈົ້າ. (ຖ້າຫາກວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງມີຄຳສັ່ງຈ່າຍເງິນລ້ຽງດູເດັກຫລາຍກວ່າໃບນຶ່ງ ແລະ ການເກັບເອົາເງິນບໍ່ກຸ້ມຄຳສັ່ງເກັບເງິນລ້ຽງດູເດັກປັດຈຸບັນປະຈຳເດືອນທຸກໆໃບ, ພະແນກ DCS ແບ່ງປັນການເກັບເງິນໃຫ້ສົມສ່ວນກັນລະຫວ່າງທຸກໆສຳນວນເອກສານ.)
   c. ກັກເອົາເງິນຈ່າຍຄ່າທຳນຽມປະຈຳປີ $35.00 ໄວ້ (ລະຫວ່າງເດືອນອົກໂຕເບີ 1st ແລະ ເດືອນເຊັບເທັມເບີ 30th, ) , ຖ້າຫາກວ່າຂ້າພະເຈົ້າບໍ່ເຄີຍໄດ້ຮັບເງິນ AFDC, TANF, ຫລື ເງິນຊົນເຜົ່າ TANF ຈັກເທື່ອ ໃນຖານະເປັນຜູ້ປົກຄອງຂອງເດັກນ້ອຍຕ່ຳກວ່າກະສຽນ, ຫລັງຈາກທີ່ເງິນລ້ຽງລູກ $550.00 ໄດ້ຖືກເບີກອອກໃຫ້ຂ້າພະເຈົ້າແລ້ວ ໃສ່ກໍຣະນີໃນປີນຶ່ງ.
   d. ເອົາເງິນທີ່ເກັບມາໄດ້ທີ່ກາຍເກີນເງິນລ້ຽງດູເດັກປັດຈຸບັນເດືອນນຶ່ງໄປໃສ່ເງິນລ້ຽງດູເດັກບໍ່ໄດ້ຈ່າຍກາຍຜ່ານມາ (ຖ້າມີ) .
   e. ຖ້າຫາກວ່າຂ້າພະເຈົ້າໄດ້ຮັບເງິນ TANF ຫລື AFDC ໃນຜ່ານມາ, ພະແນກ DCS ຈະແຈກຢາຍເງິນລ້ຽງດູເດັກບໍ່ໄດ້ຈ່າຍກາຍຜ່ານມາ (ຍົກເວັ້ນແຕ່ເງິນຈ່າຍຈາພະແນກງົບປະມານພາຍໃນ (IRS)) ຕາມດັ່ງຕໍ່ລົງໄປນີ້:
      (1) ທຳອິດ, ໄປໃສ່ເງິນລ້ຽງດູເດັກບໍ່ຈ່າຍກາຍຜ່ານມາ ທີ່ຍັງຕິດຫນີ້ຂ້າພະເຈົ້າຢູ່ ຊຶ່ງບໍ່ເຄີຍຖືກແຕ່ງຕັ້ງໃສ່ລັດຈັກເທື່ອ.
      (2) ທີສອງມາ, ໄປໃສ່ເງິນລ້ຽງດູເດັກບໍ່ຈ່າຍກາຍຜ່ານມາ ທີ່ຖືກແຕ່ງຕັ້ງຊົ່ວຄາວໃຫ້ແກ່ລັດ ໂດຍການແຕ່ງຕັ້ງທີ່ຖືກເຮັດກ່ອນ ຫລື ຫລັງຈາກເດືອນອົກໂຕເບີ 1, 1997, ແລະ ກ່ອນເດືອນອົກໂຕເບີ 1, 2008, ແລະ ຊຶ່ງບໍ່ແມ່ນພາກສ່ວນນຶ່ງຂອງເງິນລ້ຽງດູເດັກບໍ່ຈ່າຍກາຍຜ່ານມາທີ່ຖືກແຕ່ງຕັ້ງຖາວອນຕາມທີ່ຖືກບັນລະຍາຍຢູ່ໃນພາກສ່ວນ (4) ຢູ່ຂ້າງລຸ່ມນີ້.
      (3) ທີສາມມາ, ໄປໃສ່ເງິນລ້ຽງດູເດັກບໍ່ຈ່າຍກາຍຜ່ານມາຕ່າງໆ ທີ່ຍັງຕິດຫນີ້ຂ້າພະເຈົ້າຢູ່ ສຳລັບການອູ້ມຊູການພະຍາບານຂອງລູກຂອງຂ້າພະເຈົ້າ.
      (4) ທີສີ່ມາ, ໄປໃສ່ເງິນລ້ຽງດູເດັກບໍ່ຈ່າຍກາຍຜ່ານມາຕ່າງໆ ທີ່ຖືກແຕ່ງຕັ້ງຖາວອນໃຫ້ແກ່ລັດ ໂດຍການແຕ່ງຕັ້ງຂອງເງິນຊ່ວຍເຫລືອສາທາຣະນະກ່ອນເດືອນອົກໂຕເບີ 1, 1997, ຫລື ຖືກແຕ່ງຕັ້ງຫລັງຈາກວັນທີນັ້ນຍ້ອນວ່າເງິນຊ່ວຍເຫລືອຂອງຫລວງໄດ້ຖືກຈ່າຍໃຫ້ຂ້າພະເຈົ້າໃນເດືອນນັ້ນ.
      (5) ທີຫ້າມາ, ໄປໃສ່ການອູ້ມຊູດ້ານພະຍາບານຕ່າງໆທີ່ຖືກແຕ່ງຕັ້ງໃຫ້ແກ່ລັດ.

10. ການເກັບເງິນທີ່ໄດ້ຮັບມາຈາກພະແນກ IRS, ຈະຖືກເອົາໃສ່ເງິນລ້ຽງເດັກບໍ່ຈ່າຍກາຍຜ່ານມາທຸກໆເທື່ອ.ການຈ່າຍເງິນຈາກພະແນກ IRS ຈະຖືກແຈກຢາຍຕາມຣະດັບຕໍ່ລົງໄປນີ້:
    a. ທຳອິດ, ໄປໃສ່ການອູ້ມຊູດ້ານການເງິນບໍ່ຈ່າຍກາຍຜ່ານມາທີ່ຖືກແຕ່ງຕັ້ງຖາວອນ.
    b. ທີສອງມາ, ໄປໃສ່ການອູ້ມຊູດ້ານການເງິນບໍ່ຈ່າຍກາຍຜ່ານມາທີ່ຖືກແຕ່ງຕັ້ງຊົ່ວຄາວ.
    c. ທີສາມມາ, ໄປໃສ່ການອູ້ມຊູດ້ານການພະຍາບານບໍ່ຈ່າຍກາຍຜ່ານມາທີ່ຖືກແຕ່ງຕັ້ງຖາວອນ.
    d. ທີສີ່ມາ, ໄປໃສ່ເງິນລ້ຽງເດັກຕ່າງໆ ທີ່ຍັງຕິດຫນີ້ຢູ່ ຊຶ່ງບໍ່ເຄີຍຖືກແຕ່ງຕັ້ງໃຫ້ແກ່ຣັດຈັກເທື່ອ.
11. WAC-388-14A-2037 ຈະອະທິບາຍກ່ຽວກັບເງິນບໍ່ໄດ້ຈ່າຍຜ່ານມາທີ່ຖືກແຕ່ງຕັ້ງຖາວອນ.    WAC-388-14A-2038 ຈະອະທິບາຍກ່ຽວກັບເງິນບໍ່ໄດ້ຈ່າຍຜ່ານມາທີ່ຖືກແຕ່ງຕັ້ງຊົ່ວຄາວ.
12. ຂ້າພະເຈົ້າຕ້ອງສົ່ງຄືນ ເງິນທີ່ພະແນກ DCS ຈ່າຍໃຫ້ຂ້າພະເຈົ້າ ຖ້າຫາກວ່າ:
    a. ພະແນກ DCS ສົ່ງເງິນມາໃຫ້ຂ້າພະເຈົ້າດ້ວຍຄວາມຜິດພາດ.
    b. ໄດ້ຮັບເງິນຫລາຍເກີນກວ່າທີ່ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຕິດຄ້າງຢູ່ (ຍັງຖືກເອີ້ນອີກຄືກັນວ່າແມ່ນເງິນຈ່າຍເກີນ) .
13. ພະແນກ DCS ອາດຈະກອບກູ້ເອົາເງິນຈ່າຍເກີນຄືນ ແລະ/ຫລື ເງິນຈ່າຍອອກໄປດ້ວຍຄວາມຜິດພາດໂດຍການກັກເອົາເງິນຈາກເງິນລ້ຽງລູກສຳລັບອະນາຄົດທີ່ໄດ້ຮັບໂດຍຂ້າພະເຈົ້າ, ໂດຍປາສຈາກການແຈ້ງການຕໍ່ໄປຫາຂ້າພະເຈົ້າ. ອັນນີ້ໄດ້ຖືກເອີ້ນວ່າການ " ຊົດເຊີຍ " ແລະ ໄດ້ຖືກອະນຸຍາດໂດຍກົດຫມາຍ RCW 26.23.035(3). ຂ້າພະເຈົ້າອາດຈະຮ້ອງຂໍເອົາໂດຍເປັນລາຍລັກອັກສອນຢູ່ໃນຫນ້ານຶ່ງຂອງໃບຄຳຮ້ອງໃບນີ້ວ່າໃຫ້ພະແນກ DCS ຕິດຕໍ່ມາຫາຂ້າພະເຈົ້າກ່ອນທີ່ຈະເຮັດການກອບກູ້ເອົາເງິນຄືນໂດຍການຊົດເຊີຍ. ພະແນກ DCS ອາດຈະຕິດຕໍ່ມາຫາຂ້າພະເຈົ້າໃນເວລາພາຍຫລັງເພື່ອຈະຂໍເອົາການອະນຸຍາດສຳລັບການຊົດເຊີຍ ຫລື ເພື່ອຈະແຈ້ງໃຫ້ຂ້າພະເຈົ້າຊາບໂດຍທາງລາຍລັກອັກສອນວ່າພະແນກ DCS ມີແຜນທີ່ຈະກອບກູ້ເອົາການຈ່າຍເງິນຄືນໂດຍການຊົດເຊີຍນອກຈາກວ່າຂ້າພະເຈົ້າຕອບຄືນມາ. ເມື່ອເວລາພະແນກ DCS ມີສິດອຳນາດທີ່ຈະກອບກູ້ເອົາເງິນຄືນໂດຍການຊົດເຊີຍ, ສິ່ງຕໍ່ລົງໄປນີ້ຈະເກີດຂື້ນ:
    a. ພະແນກ DCS ກັກເອົາເງິນໄວ້ຮອດ 10 ເປີເຊັນ ຂອງການຈ່າຍເງິນລ້ຽງເດັກປັດຈຸບັນໃນອະນາຄົດຂອງຂ້າພະເຈົ້າ.
    b. ພະແນກ DCS ກັກເອົາເງິນໄວ້ຮອດ 100 ເປີເຊັນ ຂອງການຈ່າຍເງິນລ້ຽງເດັກປັດຈຸບັນໃນອະນາຄົດຂອງຂ້າພະເຈົ້າ.
14. ພະແນກ DCS ອາດຈະທຳການເກັບເອົາເງິນແນວອື່ນໆທີ່ຖືກອະນຸຍາດໂດຍກົດຫມາຍ RCW 74.20A.270 ເພື່ອຈະກອບກູ້ເອົາການຈ່າຍເງິນເກີນຄືນ ແລະ/ຫລື ເງິນຈ່າຍອອກໄປໃຫ້ຂ້າພະເຈົ້າດ້ວຍຄວາມຜິດພາດ. ອັນນີ້ຈະກ່ຽວຂ້ອງນຳເຖິງແມ່ນວ່າຂ້າພະເຈົ້າຈະຢຸດໄດ້ຮັບການຈ່າຍເງິນລ້ຽງລູກແລ້ວກໍຕາມໂດຍຜ່ານພະແນກ DCS. ພະແນກ DCS ຈະເລືອກເອົາທາງເລືອກອັນນີ້ພະແນກ DCS ຈະສົ່ງໃບແຈ້ງການເຖິງມືຂ້າພະເຈົ້າ. ຖ້າຫາກວ່າບໍ່ໄດ້ຮັບຄຳຄັດຄ້ານ, ພະແນກ DCS ໄດ້ຖືກອະນຸຍາດໃຫ້:

    a. ສົ່ງອອກໄປໃຫ້ນາຍຈ້າງຂອງຂ້າພະເຈົ້າ ຫລື ບຸກຄົນ ຫລື ອົງການອື່ນ ທີ່ກຳຊັບສິນໄວ້ໃຫ້ຂ້າພະເຈົ້າໃບ ***ການກັກເອົາເງິນຈາກຣາຍໄດ້ສຳລັບເງິນລ້ຽງລູກ***. ຄຳສັ່ງ / ໃບແຈ້ງການໃບນີ້ບົ່ງໃຫ້ນາຍຈ້າງຂອງຂ້າພະເຈົ້າ ຫລື ບຸກຄົນ ຫລື ອົງການອື່ນ ທີ່ຈະກັກເອົາຈຳນວນເງິນຈ່າຍອອກໄປດ້ວຍຄວາມຜິດພາດ ແລະ/ຫລື ເງິນຈ່າຍເກີນໄວ້ຈາກເງິນເຮັດວຽກ, ຣາຍໄດ້, ແລະ ຊັບສິນຂອງຂ້າພະເຈົ້າ.

    b. ຍຶນການຜູກມັດໃສ່ຊັບສິນເຮືອນຊານ ແລະ ຊັບສິນບັດສ່ວນຕົວຂອງຂ້າພະເຈົ້າ.

    c. ໃຊ້ທົນທາງແກ້ໄຂການເກັບເອົາເງິນຂອງພະແນກ DCS ທຸກໆຢ່າງທີ່ມີຢູ່ພາຍໃຕ້ກົດຫມາຍ Chapters 26.09, 26.18, 26.23, ແລະ 74.20 RCW.

15. ກົດຫມາຍ RCW 26.23.110 ອະນຸຍາດໃຫ້ພະແນກ DCS ທີ່ຈະເກັບເອົາຣາຍຈ່າຍຄ່າພະຍາບານທີ່ບໍ່ຖືກໃຊ້ແທນຄືນໃຫ້ (ລວມທັງເງິນຈ່າຍຮ່ວມກັນ, ເງິນຈ່າຍຫັກອອກ, ແລະ ຄ່າທຳນຽມຕາມທີ່ຖືກຕີຄວາມຫມາຍໄວ້ຢູ່ໃນກົດຫມາຍ WAC 388-14A-1020) ຊຶ່ງໄດ້ເກີດຂື້ນໃນນາມຂອງເດັກນ້ອຍຈາກຂ້າພະເຈົ້າພາຍໃຕ້ສະພາບການບາງຢ່າງ. ພະແນກ DCS ອາດຈະເຮັດໄດ້ໂດຍ:
    a. ການລຸດຫນີ້ທີ່ຍັງຕິດຂ້າພະເຈົ້າຢູ່ລົງ.
    b. ການລຸດເງິນລ້ຽງເດັກປັດຈຸບັນຕ່າງໆ ທີ່ຍັງຕິດຂ້າພະເຈົ້າຢູ່ລົງ ໂດຍບໍ່ກາຍເກີນ 50 ເປີເຊັນແຕ່ລະເດືອນສຳລັບນຶ່ງປີ ຫລື ຫນ້ອຍກວ່າ.
    c. ການເປີດສຳນວນເກັບເງິນໃຫມ່ໃສ່ຂ້າພະເຈົ້າ ແລະ ການໃຊ້ທົນທາງແກ້ໄຂການເກັບເງິນຂອງພະແນກ DCS ທຸກໆຢ່າງຍົກເວັ້ນແຕ່ການໂຈະໃບຂັບຂີ່ໄວ້.

16. ຖ້າຫາກວ່າຄຳສັ່ງຈ່າຍເງິນລ້ຽງເດັກຂອງຂ້າພະເຈົ້າກຳນົດໃຫ້ເອົາການຄຸ້ມກັນປະກັນພັຍສຸຂະພາບໃຫ້, ພະແນກ DCS ອາດຈະບັງຄັບໃຊ້ກົດກຳນົດອັນນັ້ນຖ້າຫາກວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຮ້ອງຂໍເອົາມັນ. ການບັງຄັບອາດຈະລວມເອົາການກໍ່ຕັ້ງຄວາມຮັບຜິດຊອບການພະຍາບານເງິນສົດສຳລັບຄ່າທຳນຽມປະຈຳເດືອນ, ບໍ່ໃຫ້ກາຍເກີນ 25 ເປີເຊັນຂອງການຮັບຜິດຊອບເງິນລ້ຽງເດັກພື້ນຖານຂອງຂ້າພະເຈົ້າຕາມທີ່ສະແດງໃຫ້ເຫັນຢູ່ໃນເຈັ້ຽຄິດໄລ່ສຳລັບຄຳສັ່ງເງິນລ້ຽງເດັກຂອງຂ້າພະເຈົ້າ.

17. ພະແນກ DCS ບໍ່ເປັນຕົວແທນຂ້າພະເຈົ້າ ຫລື ຝ່າຍກົງກັນຂ້າມຕໍ່ຄຳສັ່ງຈ່າຍເງິນລ້ຽງເດັກຂອງຂ້າພະເຈົ້າ. ເພື່ອຈະປົກປ້ອງຜົນປະໂຍດຂອງຂ້າພະເຈົ້າ, ຂ້າພະເຈົ້າຄວນຈະມີສ່ວນເຂົ້າຮ່ວມໃນການຟັງເຣື່ອງ ຫລື ການປາກົດຕົວຢູ່ສານທຸກໆຢ່າງກ່ຽວກັບຄຳສັ່ງຈ່າຍເງິນລ້ຽງເດັກຂອງຂ້າພະເຈົ້າ. ຖ້າຫາກວ່າຂ້າພະເຈົ້າບໍ່ມາ ແລະ ເຂົ້າຮ່ວມໃນການຟັງເຣື່ອງ, ຈ່າສານກົດຫມາຍອຳນາດການປົກຄອງອາດຈະອະນຸມັດຄຳຮ້ອງຂໍທຸກໆຢ່າງທີ່ຖືກເຮັດໂດຍພະແນກ DCS ຫລື ຝ່າຍກົງກັນຂ້າມຕໍ່ຄຳສັ່ງຈ່າຍເງິນລ້ຽງເດັກຂອງຂ້າພະເຈົ້າໂດຍປາສຈາກການແຈ້ງການຕໍ່ມາຫາຂ້າພະເຈົ້າ.

18. ພະແນກ DCS ສາມາດຝາກເຂົ້າໃສ່ເງິນລ້ຽງເດັກຂອງຂ້າພະເຈົ້າໂດຍກົງໂລດເຂົ້າໃສ່ບັນຊີທະນາຄານຂອງຂ້າພະເຈົ້າໂດຍທາງການໂອນເງິນທາງເອເລກໂຕຣນິກ (EFT). **ຖ້າຫາກວ່າຂ້າພະເຈົ້າບໍ່ອະນຸຍາດການຝາກເຂົ້າໂດຍກົງ,ພະແນກ DCS ຈະສົ່ງມາໃຫ້ຂ້າພະເຈົ້າໂດຍອັດຕະໂນມັດໂລດບັດVisa ຖອນເງິນທີ່ມີເງິນເກັບມັຽນໄວ້ຢູ່ນຳຊຶ່ງຖືກເອີ້ນວ່າບັດເງິນ DCS.** ຖ້າຫາກວ່າພະແນກ DCS ຈົດຊື່ຂ້າພະເຈົ້າເຂົ້າໃສ່ໃນໂຄງການບັດເງິນDCS, ພະແນກ DCS ຈະຝາກໂອນເງິນຈ່າຍລ້ຽງເດັກຂອງຂ້າພະເຈົ້າເຂົ້າໃສ່ບັດແທນທີ່ວ່າຈະໃສ່ບັນຊີທະນາຄານຂອງຂ້າພະເຈົ້າ.ຢູ່ໃນກໍຣະນີສ່ວນຫລາຍ,ເງິນຈ່າຍຄ່າລ້ຽງລູກຈະມີໄວ້ໃຫ້ໃນບັນຊີທະນາຄານຂອງຂ້າພະເຈົ້າຫລື ໃນບັດເງິນ DCS ຂອງຂ້າພະເຈົ້າພາຍໃນສາມວັນເຮັດການຫລັງຈາກທີ່ພະແນກ DCS ຄິດໄລ່ເງິນໃສ່ກໍຣະນີຂອງຂ້າພະເຈົ້າ.ບັດເງິນ DCS ສາມາດຖືກໃຊ້ການໄດ້ຢູ່ທຸກໆບ່ອນທີ່ຮັບເອົາບັດVISA ຫລື ຕາມເຄື່ອງຈັກຖອນເງິນATM.ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບການຈ່າຍເງິນທາງເອເລກໂຕຣນິກຫລືທາງເລືອກເອົາທາງອື່ນສຳລັບການຮັບເອົາການຈ່າຍເງິນ,ຂ້າພະເຈົ້າສາມາດໂທໄປທີ່800-468-7422 ຫລື ທາງອອນລາຍນ໌ໄດ້ທີ່ www.dshs.wa.gov/esa/division-child-support.

19. ພະແນກ DCS ອາດຈະສົ່ງຫນັງສືແຈ້ງການມາໃຫ້ຂ້າພະເຈົ້າໂດຍທາງໄປສະນີຊັ້ນນຶ່ງ.ພະແນກ DCS ອາດຈະສົ່ງໃບແຈ້ງການເຫລົ່ານີ້ໄປຫາທີ່ຢູ່ບ່ອນທີ່ຮູ້ຈັກສຸດທ້າຍຫມູ່ຂອງຂ້າພະເຈົ້າ.

ຂ້າພະເຈົ້າເຫັນພ້ອມທີ່ຈະ:

1. ສົ່ງມາໃຫ້ພະແນກ DCS ເງິນຈ່າຍລ້ຽງເດັກທຸກໆຢ່າງ ທີ່ຂ້າພະເຈົ້າໄດ້ຮັບຈາກຄົນໃດຄົນນຶ່ງນອກຈາກພະແນກ DCS. ຂ້າພະເຈົ້າຕ້ອງສົ່ງເງິນຈ່າຍມາໃຫ້ພະແນກ DCS ພາຍໃນແປດວັນ.
2. ບອກພະແນກ DCS ໂດຍທັນທີໂລດ
   ຖ້າຫາກວ່າລູກຂອງຂ້າພະເຈົ້າໄດ້ຮັບເງິນຈ່າຍຕໍ່ລົງໄປນີ້ແນວໃດແນວນຶ່ງໃນນາມຂອງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ.ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຈະໄດ້ຮັບເຄຣດິດຂອງເງິນຈ່າຍລ້ຽງລູກທີ່ລູກຂອງທ່ານໄດ້ຮັບ.ທ່ານອາດຈະຖືກຂໍໃຫ້ປືນປັນເງິນຈ່າຍເຫລົ່ານີ້.ຖ້າຫາກວ່າເງິນເຄຣດິດຈ່າຍມາສະແດງໃຫ້ເຫັນວ່າພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງຖືກຈ່າຍເງິນເກີນໃຫ້,ທ່ານຈະຖືກບົ່ງໃຫ້ຈ່າຍຄືນຈຳນວນເງິນທີ່ຖືກຈ່າຍເກີນ.ໂດຍທົ່ວໄປແລ້ວ,ຜູ້ປົກຄອງຂອງເດັກນ້ອຍຕ້ອງຂໍເອົາເງິນສະວັດດີການເຫລົ່ານີ້.
   a. ເງິນສະວັດດີການຖືກຈ່າຍໃຫ້ໂດຍກົມແຮງງານ ແລະ
      ອຸດສາຫະກັມຫລືເງິນທົດແທນແຮງງານທີ່ຖືກຈ່າຍໂດຍຜູ້ຮັບປະກັນໂດຍຕົນເອງທີ່ຖືກຈ່າຍຫລັງຈາກເດືອນຈຸນລາຍ 1, 1990.
   b. ເງິນຫວັງເພິ່ງຄວາມເສັຽອົງຄະຫລືເງິນບັ້ນບຳນານຈາກພະແນກປົກຄອງຄວາມປອດພັຍຂອງສັງຄົມທີ່ຖືກຈ່າຍຫລັງຈາກເດືອນຈຸນລາຍ 1, 1990.
   c. ການແບ່ງປັນເງິນສະວັດດີການຈາກກົມນັກຮົບເກົ່າໃນວັນທີຫລືຫລັງຈາກເດືອນຈຸນລາຍ 24, 2015.
3. ບອກພະແນກ DCS ຖ້າຫາກວ່າຂ້າພະເຈົ້າຮ້ອງຂໍໃຫ້ຄົນອື່ນອີກ ຫລື ອົງການອື່ນທີ່ຈະເກັບເອົາເງິນລ້ຽງເດັກໃຫ້ຂ້າພະເຈົ້າ.
4. ບອກພະແນກ DCS ຖ້າຫາກວ່າທີ່ຢູ່ຂອງຂ້າພະເຈົ້າ ຫລື ທີ່ຢູ່ຂອງລູກຂອງຂ້າພະເຈົ້າປ່ຽນແປງ.
5. ສົ່ງມາໃຫ້ພະແນກ DCS ໃບໂກປີຂອງຄຳສັ່ງຈ່າຍເງິນລ້ຽງເດັກທຸກໆໃບ ທີ່ປ່ຽນແປງກົດກຳນົດເງິນລ້ຽງເດັກ ຫລື ຄວາມຄຸ້ມຄອງຂອງເດັກນ້ອຍຜູ້ທີ່ຖືກບົ່ງຊື່ຢູ່ໃນສຳນວນເອກສານຂອງຂ້າພະເຈົ້າ.

ຖ້າຫາກວ່າທ່ານມີຄຳຖາມ, ຈົ່ງຕິດຕໍ່ຫາ:
DIVISION OF CHILD SUPPORT
PO BOX 11520
TACOMA WA 98411-5520

ພາຍໃນເຂດ ______________________ ໂທຫາ ______________________

ພາຍນອກເຂດ ______________________ ໂທຫາ ______________________

ການບໍຣິການ TTY/TDD ກໍມີໄວ້ໃຫ້ສຳລັບຄົນເສັຽອົງຄະດ້ານການປາກເວົ້າ ຫລື ການຟັງສຽງ.
ແວ່ເຂົ້າປ່ຽມແວບໄຊທ໌ຂອງພວກເຮົາໄດ້ທີ່: www.dshs.wa.gov/esa/division-child-support

ຈະບໍ່ມີບຸກຄົນໃດ, ບ້ອນວ່າຜິວພັນ, ສີສັນ, ເຊື້ອຊາດດັ້ງເດີມ, ລັດທິ, ສາສນາ, ເພດ, ອາຍຸ, ຫລື ຄວາມເສັຽອົງຄະ, ຈະຖືກແບ່ງແຍກຂົມຂູ່ໝັ້ນວັນນະຢູ່ໃນວຽກງານ, ການບໍຣິການ, ຫລື ແງ່ໃດແງ່ນຶ່ງຂອງກິຈກັມຂອງໂຄງການ. ຟອມໃບນີ້ມີໄວ້ໃຫ້ໃນຮູບແບບອື່ນຕາມຄຳຮ້ອງຂໍ.

U.S. Bank ReliaCard® ການເປີດເຜີຍຂໍ້ມູນກ່ອນການຄອບຄອງ
ຊື່ໂຄງການ:Washington Division of Child Support
ໜ່ວຍງານຊ່ວຍເຫຼືອເດັກວໍຊິງຕັນ
ວັນທີອ້າງອີງ:ມິຖຸນາ 2017

ທ່ານມີຕົວເລືອກກ່ຽວກັບວິທີຮັບການຊຳລະຂອງທ່ານ,
ລວມທັງການຝາກເງິນເຂົ້າບັນຊີທະນາຄານຂອງທ່ານໂດຍກົງຫຼືເຂົ້າບັດແບບເຕີມເງິນນີ້.
ສອບຖາມນຳຕົວແທນຂອງທ່ານສຳລັບຕົວເລືອກທີ່ມີໃຫ້ ແລະ ເລືອກຕົວເລືອກທີ່ທ່ານຕ້ອງການ.

| ຄ່າທຳນຽມລາຍເດືອນ | ຕໍ່ການຊື້ | ການຖອນເງິນຜ່ານຕູ້ເອທີເອັມ | ການເພີ່ມເງິນເຂົ້າ |
| --- | --- | --- | --- |
| **$0** | **$0** | **$0** ໃນເຄືອຂ່າຍ<br>**$0.99*** ນອກເຄືອຂ່າຍ | **ບໍ່ກ່ຽວຂ້ອງ** |

| | |
| --- | --- |
| ການກວດຍອດເງິນຜ່ານຕູ້ເອີທີເອັມ (ໃນເຄືອຂ່າຍ ຫຼື ນອກເຄືອຂ່າຍ) | $0 |
| ສູນບໍລິການລູກຄ້າ (ແບບອັດຕະໂນມັດ ຫຼື ຜ່ານຕົວແທນ) | $0 ຕໍ່ການໂທ 1 ຄັ້ງ |
| ບໍ່ມີການເຄື່ອນໄຫວ | $0 |

**ພວກເຮົາເກັບຄ່າທຳນຽມອື່ນໆອີກ 3 ປະເພດ.** ໜຶ່ງໃນນັ້ນແມ່ນ:

| | |
| --- | --- |
| ຄ່າປ່ຽນບັດໃໝ່ (ຈັດສົ່ງແບບມາດຕະຖານ ຫຼື ແບບດ່ວນ) | $0 or $15.00 |

* ຄ່າທຳນຽມນີ້ອາດຕໍ່າກວ່ານີ້ອີງຕາມວິທີ ແລະ ສະຖານທີ່ທີ່ບັດຖືກນຳໃຊ້.
ເບິ່ງຕາຕະລາງຄ່າທຳນຽມທີ່ຄັດຕິດມາພ້ອມ ສຳລັບວິທີການເຂົ້າເຖິງເງິນ ແລະ ຂໍ້ມູນຍອດເງິນ
ຂອງທ່ານໂດຍບໍ່ເສຍຄ່າ.

**ບໍ່ມີຄຸນສົມບັດການເບີກເກີນວົງເງິນ/ສິນເຊື່ອ**
ວົງເງິນຂອງທ່ານມີສິດໄດ້ຮັບການປະກັນຈາກບໍລິສັດປະກັນເງິນຝາກແຫ່ງລັດ (FDIC)

ສຳລັບຂໍ້ມູນຂ່າວສານທົ່ວໄປກ່ຽວກັບບັນຊີແບບຕື່ມເງິນ, ເຂົ້າໄປທີ່ *cfpb.gov/prepaid.*
ຊອກຫາລາຍລະອຽດແລະເງື່ອນໄຂສຳລັບຄ່າທຳນຽມແລະການບໍລິການທັງໝົດພາຍໃນຊຸດແພັກເກັດບັດ ຫຼື
ໂທຫາ **1-866-363-4136** ຫຼື ເຂົ້າໄປທີ່ ***usbankreliacard.com***.

# U.S. Bank ReliaCard® ຕາຕະລາງລາຍການຄ່າທຳນຽມ

ຊື່ໂຄງການ: Washington Division of Child Support ໜ່ວຍງານຊ່ວຍເຫຼືອເດັກວໍຊິງຕັນ

ວັນທີມີຜົນນຳໃຊ້: ພຶດສະພາ 2018

| ຄ່າທຳນຽມທັງໝົດ | ມູນຄ່າ | ລາຍລະອຽດ |
|---|---|---|
| **ຮັບເງິນສົດ** | | |
| ການຖອນເງິນຈາກຕູ້ເອທີເອັມ (ໃນເຄືອຂ່າຍ) | $0 | ນີ້ແມ່ນຄ່າທຳນຽມຂອງພວກເຮົາຕໍ່ການຖອນ. "ໃນເຄືອຂ່າຍ" ໝາຍເຖິງເຄືອຂ່າຍເອທີເອັມຂອງທະນາຄານແຫ່ງສະຫະລັດ ຫຼື MoneyPass®ສາມາດຊອກຫາທີ່ຕັ້ງໄດ້ທີ່ <u>*usbank.com/locations*</u> ຫຼື <u>*moneypass.com/atm-locator*</u>. |
| ການຖອນເງິນ ຜ່ານຕູ້ເອທີເອັມ (ນອກເຄືອຂ່າຍ) | $0.99 | ນີ້ແມ່ນຄ່າທຳນຽມຂອງພວກເຮົາຕໍ່ການຖອນ. ຄ່າທຳນຽມນີ້ຖືກຍົກເວັ້ນສຳລັບການຖອນເງິນຜ່ານຕູ້ເອທີເອັມ 2 ຄັ້ງທຳອິດຂອງເດືອນ ເຊິ່ງລວມທັງການຖອນເງິນຜ່ານຕູ້ເອທີເອັມ (ນອກເຄືອຂ່າຍ) ແລະ ການຖອນເງິນຜ່ານຕູ້ເອທີເອັມຢູ່ຕ່າງປະເທດ."ນອກເຄືອຂ່າຍ" ໝາຍເຖິງຕູ້ເອທີເອັມທັງໝົດທີ່ຢູ່ນອກເຄືອຂ່າຍທະນາຄານ ແຫ່ງສະຫະລັດ ຫຼື MoneyPass.ທ່ານຍັງອາດຖືກເກັບຄ່າທຳນຽມໂດຍຜູ້ໃຫ້ບໍລິການຕູ້ເອທີເອັມ ເຖິງແມ່ນທ່ານບໍ່ໄດ້ເຮັດທຸລະກຳໃດໜຶ່ງສຳເລັດ. |
| ການຖອນເງິນສົດຢູ່ທີ່ປ່ອງບໍລິການ | $0 | ນີ້ແມ່ນຄ່າທຳນຽມ ຂອງພວກເຮົາເມື່ອເວລາທີ່ທ່ານຖອນເງິນສົດດ້ວຍບັດຂອງທ່ານຈາກປ່ອງບໍລິການຢູ່ທີ່ທະນາຄານ ຫຼື ສະຫະກອນສິນເຊື່ອທີ່ຮັບບັດ Visa® |
| **ຂໍ້ມູນຂ່າວສານ** | | |
| ກວດຍອດເງິນຜ່ານຕູ້ເອທີເອັມ (ໃນເຄືອຂ່າຍ) | $0 | ນີ້ແມ່ນຄ່າທຳນຽມ ຂອງພວກເຮົາຕໍ່ການກວດຍອດເງິນ."ໃນເຄືອຂ່າຍ" ໝາຍເຖິງເຄືອຂ່າຍ ເອທີເອັມຂອງທະນາຄານແຫ່ງສະຫະລັດ ຫຼື MoneyPass.ສາມາດຊອກຫາທີ່ຕັ້ງໄດ້ທີ່ <u>*usbank.com/locations*</u> ຫຼື<u>*moneypass.com/atm-locator*</u>. |
| ກວດຍອດເງິນຜ່ານຕູ້ ເອທີເອັມ (ນອກເຄືອຂ່າຍ) | $0 | ນີ້ແມ່ນຄ່າທຳນຽມ ຂອງພວກເຮົາຕໍ່ການກວດຍອດເງິນ."ນອກເຄືອຂ່າຍ" ໝາຍເຖິງຕູ້ເອທີເອັມທັງໝົດທີ່ຢູ່ນອກເຄືອຂ່າຍເອທີເອັມ ຂອງທະນາຄານແຫ່ງສະຫະລັດ ຫຼື MoneyPass.ທ່ານຍັງອາດຖືກເກັບຄ່າທຳນຽມເພີ່ມອີກໂດຍຜູ້ໃຫ້ບໍການເອທີເອັມ. |
| **ການນຳໃຊ້ບັດ ຂອງທ່ານຢູ່ນອກສະຫະລັດ** | | |
| ການເຮັດທຸລະກຳລະຫວ່າງປະເທດ | 2% | ນີ້ແມ່ນຄ່າທຳນຽມທີ່ພວກເຮົາເກັບນຳທ່ານ ເມື່ອທ່ານນຳໃຊ້ບັດຂອງທ່ານສຳລັບການຊື້ເຄື່ອງກັບຮ້ານຄ້າຕ່າງປະເທດ ແລະ ຖອນເງິນສົດຈາກຕູ້ເອທີເອັມຢູ່ຕ່າງປະເທດ ແລະ ແມ່ນອັດຕາສ່ວນຮ້ອຍຂອງມູນຄ່າໂດລາທີ່ເຮັດທຸລະກຳ ພາຍຫຼັງການປ່ຽນສະກຸນເງິນຕາໃດໜຶ່ງ.ບາງຮ້ານຄ້າ ແລະ ການເຮັດທຸລະກຳຜ່ານຕູ້ເອທີເອັມບາງລາຍການຖືວ່າເປັນການເຮັດທຸລະກຳຕ່າງປະເທດ ພາຍໃຕ້ກົດລະບຽບເຄືອຂ່າຍທີ່ນຳໃຊ້ ເຖິງແມ່ນວ່າ ທ່ານ ແລະ/ຫຼື ຮ້ານຄ້າ ຫຼື ຕູ້ເອທີເອັມຈະຕັ້ງຢູ່ໃນສະຫະລັດກໍ່ຕາມ ແລະ ພວກເຮົາບໍ່ໄດ້ຄວບຄຸມວິທີທີ່ຮ້ານຄ້າ, ຕູ້ເອທີເອັມ ແລະ ການເຮັດທຸລະກຳເຫຼົ່ານີ້ຖືກຈັດປະເພດເພື່ອຈຸດປະສົງນີ້. |
| ການຖອນເງິນຜ່ານຕູ້ເອທີເອັມລະຫວ່າງປະເທດ | $2.50 | ນີ້ແມ່ນຄ່າທຳນຽມ ຂອງພວກເຮົາຕໍ່ການຖອນ.ຄ່າທຳນຽມນີ້ຖືກຍົກເວັ້ນສຳລັບການຖອນເງິນຜ່ານຕູ້ເອທີເອັມ 2 ຄັ້ງທຳອິດຂອງເດືອນ ເຊິ່ງລວມທັງການຖອນເງິນຜ່ານຕູ້ເອທີເອັມ (ນອກເຄືອຂ່າຍ) ແລະ ການຖອນເງິນຜ່ານຕູ້ເອທີເອັມຢູ່ຕ່າງປະເທດ.ທ່ານຍັງອາດຖືກເກັບຄ່າທຳນຽມໂດຍຜູ້ໃຫ້ບໍລິການຕູ້ເອທີເອັມ ເຖິງແມ່ນທ່ານບໍ່ໄດ້ເຮັດທຸລະກຳໃດໜຶ່ງສຳເລັດກໍ່ຕາມ. |
| **ອື່ນໆ** | | |
| ການປ່ຽນບັດໃໝ່ | $0 | ນີ້ແມ່ນຄ່າທຳນຽມຕໍ່ການປ່ຽນບັດໃໝ່ທີ່ໄດ້ສົ່ງຫາທ່ານດ້ວຍ ການຈັດສົ່ງແບບມາດຕະຖານ (ພາຍໃນ 10 ວັນລັດຖະການ). |
| ການຈັດສົ່ງບັດປ່ຽນໃໝ່ແບບດ່ວນ | $15.00 | ນີ້ແມ່ນຄ່າທຳນຽມ ຂອງພວກເຮົາ ສຳລັບການຈັດສົ່ງແບບດ່ວນ (ພາຍໃນ 3 ວັນລັດຖະການ) ທີ່ໄດ້ເກັບເພີ່ມຈາກຄ່າທຳນຽມການປ່ຽນບັດໃໝ່ໃດໜຶ່ງ. |

ວົງເງິນຂອງທ່ານມີສິດໄດ້ຮັບການປະກັນຈາກບໍລິສັດປະກັນເງິນຝາກແຫ່ງລັດ (FDIC). ເງິນຂອງທ່ານຈະຖືກຮັກໄວ້ຢູ່ທີ່ສະມາຄົມທະນາຄານແຫ່ງສະຫະລັດ, ສະຖາບັນປະກັນຂອງບໍລິສັດປະກັນເງິນຝາກແຫ່ງລັດ (FDIC), ແລະ ໄດ້ຮັບການປະກັນສູງເຖິງ $250,000 ໂດຍບໍລິສັດປະກັນເງິນຝາກແຫ່ງລັດ (FDIC) ໃນກໍລະນີທີ່ທະນາຄານລົ້ມເຫຼວ.ສຳລັບລາຍລະອຽດ, ໃຫ້ເບິ່ງທີ່ <u>*fdic.gov/deposit/deposits/prepaid.html*</u> .

ບໍ່ມີຄຸນສົມບັດການເບີກເກີນວົງເງິນ/ສິນເຊື່ອ
ຕິດຕໍ່ຫາສູນບໍລິການຜູ້ຖືບັດທາງໂທລະສັບໄດ້ທີ່ **1-866-363-4136**, ທາງໄປສະນີໄດ້ທີ່ P.O. Box 551617, Jacksonville, FL 32255 ຫຼື ເຂົ້າໄປທີ່ <u>***usbankreliacard.com***</u>.

ReliaCard ແມ່ນອອກໃຫ້ໂດຍສະມາຄົມທະນາຄານແຫ່ງສະຫະລັດອີງຕາມໃບອະນຸຍາດຈາກ Visa U.S.A. Inc. ©2018
ທະນາຄານແຫ່ງສະຫະລັດ.ສະມາຊິກບໍລິສັດປະກັນເງິນຝາກແຫ່ງລັດ (FDIC).

ສໍາລັບຂໍ້ມູນຂ່າວສານທົ່ວໄປກ່ຽວກັບບັນຊີແບບຕື່ມເງິນ, ເຂົ້າໄປທີ່ *cfpb.gov/prepaid*.ຖ້າຫາກທ່ານມີຄໍາຕິຕຽນກ່ຽວກັບບັນຊີແບບຕື່ມເງິນ, ໃຫ້ໂທຫາສໍານັກງານປົກປ້ອງການເງິນຜູ້ບໍລິໂພກໄດ້ທີ່ເບີ 1-855-411-2372 ຫຼື ເຂົ້າໄປທີ່ *cfpb.gov/complaint*.

ເຖິງວ່າ ທະນາຄານ ສະຫະລັດ ຈະມີການສື່ສານເປັນພາລາວ, ແຕ່ບໍ່ແມ່ນ ການສື່ສານທັງໝົດຫຼັງຈາກນັ້ນຈະເປັນພາສາລາວ. ການບໍລິການບາງຢ່າງ ແລະ ການຕິດຕໍ່ພົວພັນ, ລວມທັງເອກະສານສໍາຄັນຕ່າງໆທີ່ ກ່ຽວຂ້ອງກັບການເປີດ ແລະ ການບໍາລຸງຮັກສາຜະລິດຕະພັນຂອງພວກເຮົາ (ເຊັ່ນ ຂໍ້ຕົກລົງ ແລະ ຖະແຫຼງການຕ່າງໆກ່ຽວກັບບັນຊີ), ເບີໂທລະສັບ, ເວັບໄຊ, ແລະ ການສື່ສານອື່ນໆທາງອິນເຕີເນັດ ອາດຈະມີການສື່ສານເປັນພາສາອັງກິດ ເທົ່ານັ້ນ. ພວກເຮົາມີນາຍພາສາອິດສະຫຼະພ້ອມທີ່ຈະໃຫ້ຄວາມຊ່ວຍ ເຫຼືອແກ່ທ່ານຕາມທີ່ຕ້ອງການ.

ReliaCard ແມ່ນອອກໃຫ້ໂດຍສະມາຄົມທະນາຄານແຫ່ງສະຫະລັດອີງຕາມໃບອະນຸຍາດຈາກ Visa U.S.A. Inc. ©2018
ທະນາຄານແຫ່ງສະຫະລັດ.ສະມາຊິກບໍລິສັດປະກັນເງິນຝາກແຫ່ງລັດ (FDIC).